**ເອກະສານປາຖະກະຖາ**

**ວັນການທູດລາວ ຄົບຮອບ 78 ປີ**

**( 12 ຕຸລາ 1945 - 12 ຕຸລາ 2023 )**

ວັນການທູດລາວ ແມ່ນວັນດຽວກັນກັບ ວັນປະກາດເອກະລາດ ເຊິ່ງເປັນວັນໜຶ່ງທີ່ສຳຄັນທີ່ສຸດໃນປະຫວັດສາດ ຂອງຊາດລາວ ເພາະເຮັດໃຫ້ປະຊາຄົມໂລກຮັບຮູ້ເຖິງຄວາມເປັນເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງປະເທດລາວ. ວັນການທູດລາວ ແມ່ນໝາກຜົນແຫ່ງການຕໍ່ສູ້ ດ້ວຍກຳລັງປະກອບອາວຸດ ບວກກັບການຕໍ່ສູ້ທາງດ້ານການເມືອງ ແລະ ຄວາມສາມັກຄີກັນ ຕໍ່ສູ້ຕ້ານສັດຕູຕົວດຽວກັນ ຂອງ 3 ຊາດອິນດູຈີນ, ແມ່ນແບບຢ່າງທີ່ຫາຍາກທີ່ສຸດໃນການພົວພັນສາກົນ ຂອງໂລກ. ເນື່ອງໃນໂອກາດວັນການທູດລາວ ຄົບຮອບ 78 ປີ ( 12 ຕຸລາ 1945 - 12 ຕຸລາ 2023 ), ຄະນະໂຄສະນາອົບຮົມສູນກາງພັກ ໄດ້ສ້າງເອກະສານປາຖະກະຖາ ເພື່ອໃຫ້ຄະນະພັກຂັ້ນຕ່າງໆ ໄດ້ຈັດຕັ້ງເຊື່ອມຊຶມຮັບຮູ້ປະຫວັດຄວາມເປັນມາ, ແນວທາງນະໂຍບາຍ ຂອງພັກ - ລັດ ກໍຄື ຜົນງານການເຄື່ອນໄຫວວຽກງານຕ່າງປະເທດໃນໄລຍະຜ່ານມາ, ເພື່ອພ້ອມກັນເສີມຂະຫຍາຍດ້ານດີ ແລະ ປັບປຸງແກ້ໄຂບັນຫາທີ່ບໍ່ທັນສອດຄ່ອງ ເຮັດໃຫ້ແນວທາງການຕ່າງປະເທດ ຂອງພັກ ໄດ້ຮັບການຈັດຕັ້ງຜັນຂະຫຍາຍ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະເທດຊາດ, ລາຍລະອຽດດັ່ງນີ້:

**I. ປະຫວັດຄວາມເປັນມາ ຂອງວັນການທູດລາວ.**

ພາຍຫຼັງ ຈັກກະພັດຝຣັ່ງ ຂະຫຍາຍການຍຶດຄອງໃນອິນດູຈີນ, ໂດຍໄດ້ຍຶດເອົາ ຫວຽດນາມ, ລາວ ແລະ ກຳປູເຈຍ ເປັນຫົວເມືອງຂຶ້ນ; ປະເທດລາວ ໄດ້ຕົກເປັນຫົວເມືອງຂຶ້ນໃຫ້ແກ່ຈັກກະພັດຝຣັ່ງ ໃນປີ 1893, ປະຊາຊົນລາວ ກໍຄືປະຊາຊົນ 3 ຊາດອິນດູຈີນ ໄດ້ຖືກກົດຂີ່ຂົ່ມເຫັງຢ່າງໂຫດຮ້າຍປ່າເຖື່ອນ, ຖືກເກນໄປເປັນຂ້ອຍຂ້າ, ເປັນກຳມະກອນເຮັດທາງ ແລະ ເປັນຂ້າທາດຮັບໃຊ້ຝຣັ່ງທຸກຮູບແບບ.

ປີ 1901 ໄດ້ເກີດມີຂະບວນ ຂອງປະຊາຊົນລາວທີ່ຮັກຊາດ ລຸກຮື້ຂຶ້ນຕ້ານການປົກຄອງ ຂອງຝຣັ່ງ ຢູ່ຫຼາຍແຂວງ ຂອງປະເທດລາວ ເປັນຕົ້ນແມ່ນ ຂະບວນການຕໍ່ສູ້ ຂອງພໍ່ກະດວດ ຢູ່ແຂວງສະຫວັນນະເຂດ, ອົງແສນ ຢູ່ແຂວງຜົ້ງສາລີ, ເຈົ້າຟ້າປັດໄຈ ຢູ່ແຂວງຊຽງຂວາງ, ຫຼວງພະບາງ, ນາຍຄູຄຳ ຢູ່ວຽງຈັນ ແລະ ຜູ້ອື່ນໆ, ແຕ່ກໍບໍ່ມີຂະບວນໃດທີ່ສາມາດຍາດໄດ້ໄຊຊະນະ ຍ້ອນບໍ່ມີພັກນຳພາຕໍ່ສູ້.

ວັນທີ 3 ກຸມພາ 1930 ພັກກອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນໂດຍ ປະທານ ໂຮ່ຈີມິນ, ເຮັດໃຫ້ 3 ຊາດອິນດູຈີນ ລາວ, ຫວຽດນາມ ແລະ ກຳປູເຈຍ ໄດ້ສຳພັນກັນເຂົ້າເປັນກ້ອນກຳລັງສາມັກຄີ ເພື່ອຕໍ່ສູ້ກັບພວກລ່າເມືອງຂຶ້ນຝຣັ່ງ. ໃນຂະນະດຽວກັນ, ກະແສຟອງປະຕິວັດ ກໍໄດ້ເກີດຂຶ້ນ ຢູ່ທົ່ວໂລກ, ອັນໄດ້ເຮັດໃຫ້ລະບອບລ່າເມືອງຂຶ້ນ ຂອງເອີຣົບ ເລີ່ມສັ່ນຄອນ ແລະ ອ່ອນເພຍລົງຢ່າງໜັກໜ່ວງ, ອັນເນື່ອງມາຈາກຜົນສະທ້ອນ ຂອງສົງຄາມໂລກ ຄັ້ງທີ II. ກະແສຟອງດັ່ງກ່າວ ໄດ້ເປັນສິ່ງກະຕຸກຊຸກຍູ້ເຮັດໃຫ້ການເຄື່ອນໄຫວປະຕິວັດ ຢູ່ພາຍໃນປະເທດເຮົາ ເລີ່ມກໍ່ຕົວເປັນຂະບວນລຸກຮື້ຂຶ້ນ ເພື່ອປົດປ່ອຍຕົນເອງອອກຈາກການເປັນຂ້ອຍຂ້າໃຫ້ຕ່າງຊາດ; ອົງຄະນະພັກແຄ້ວນລາວ ໄດ້ນຳພາປະຊາຊົນລຸກຂຶ້ນຕໍ່ສູ້ ແລະ ສາມາດປະກາດ

ເອກະລາດ ຕໍ່ຊາວໂລກໃນ ວັນທີ 12 ຕຸລາ 1945, ພ້ອມທັງໄດ້ສ້າງຕັ້ງຄະນະລັດຖະບານລາວເອກະລາດ, ໂດຍໄດ້ມີການຮ່າງລັດຖະທຳມະນູນ ຂອງຊາດລາວຂຶ້ນ.

ໃນແນວທາງການເມືອງ ຂອງລັດຖະບານລາວຊຸດທຳອິດ ເຖິງວ່າບໍ່ທັນໄດ້ກຳນົດແນວທາງການຕ່າງປະເທດຢ່າງຈະແຈ້ງ, ແຕ່ຄະນະລັດຖະບານ ກໍໄດ້ມີການຕົກລົງສ້າງຕັ້ງກອງທະຫານປະສົມລາວ - ຫວຽດນາມ ເພື່ອຊ່ວຍກັນຕໍ່ຕ້ານ ກັບສັດຕູພາຍນອກ ໂດຍພາຍໃຕ້ການຊີ້ນຳ - ນຳພາ ຂອງລັດຖະມົນຕີກະຊວງການຕ່າງປະເທດລາວ ຜູ້ທຳອິດຄື ສະເດັດເຈົ້າ ສຸພານຸວົງ. ເຫດການນັ້ນ ຖືເປັນເຫດການປະຫວັດສາດອັນສຳຄັນ ຂອງປວງຊົນລາວ ແລະ ທັງຖືເປັນວັນກຳເນີດ **"ວັນການທູດລາວ"** ( ວັນທີ 12 ຕຸລາ 1945 ), ເຊິ່ງໄດ້ຮັບການກຳນົດຢ່າງເປັນທາງການຕາມແຈ້ງການ ຂອງຫ້ອງວ່າການສູນກາງພັກ, ສະບັບເລກທີ 230/ຫສພ, ລົງວັນທີ 19 ມິຖຸນາ 2013 ແລະ ແຈ້ງການ ຂອງຫ້ອງວ່າການລັດຖະບານ, ສະບັບເລກທີ 1102/ຫລບ.ກລຂ, ລົງວັນທີ 25 ກໍລະກົດ 2013.

## II. ນະໂຍບາຍການຕ່າງປະເທດ ໃນແຕ່ລະໄລຍະ.

ຈາກອະດີດ ມາເຖິງ ປັດຈຸບັນ, ນະໂຍບາຍການຕ່າງປະເທດ ແມ່ນຖືກກຳນົດອອກ ເພື່ອຮັບໃຊ້ການເຄື່ອນໄຫວການທູດແບບພາວະວິໄສ ກໍຄື ແທດເໝາະກັບສະພາບການພາຍໃນປະເທດ, ພາກພື້ນ ແລະ ສາກົນໃນແຕ່ລະໄລຍະ ເພື່ອຍາດແຍ່ງເອົາຜົນປະໂຫຍດສູງສຸດມາໃຫ້ປະເທດຊາດ. ໃນໄລຍະການຕໍ່ສູ້ກູ້ຊາດ, ວຽກງານການທູດ ແມ່ນຕິດພັນກັບປະຊາຊົນ ຫຼື ເອີ້ນວ່າ ການທູດປະຊາຊົນ ເຊິ່ງການນຳຮຸ່ນກ່ອນ ໄດ້ນຳໃຊ້ເພື່ອຂົນຂວາຍ ແລະ ປຸກລະດົມນ້ຳໃຈຮັກຊາດ ຂອງປະຊາຊົນລາວບັນດາເຜົ່າ ບົນພື້ນຖານການຕິດພັນກັບປະຊາຊົນຢ່າງແທ້ຈິງ ຈົນເຮັດໃຫ້ສາມາດເຕົ້າໂຮມປະຊາຊົນ ເພື່ອລຸກຮື້ຂຶ້ນ ຕໍ່ສູ້ຕ້ານຈັກກະພັດຜູ້ຮຸກຮານ ແລະ ສາມາດສະຖາປະນາປະເທດເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 02 ທັນວາ 1975 ຢ່າງເປັນທາງການ ທີ່ເຮັດໃຫ້ໂລກໄດ້ຮັບຮູ້ ສປປ ລາວ ມາເຖິງປັດຈຸບັນ.

ການປະຕິບັດນະໂຍບາຍການຕ່າງປະເທດ ສາມາດແບ່ງອອກເປັນ 04 ໄລຍະສຳຄັນ ດັ່ງນີ້:

1. ປີ 1945 - 1975: ພາຍຫຼັງລາວເຮົາໄດ້ປະກາດເອກະລາດ ຄັ້ງທຳອິດ ໃນປີ 1945, ໃນປີ 1945 - 1962 ເຊິ່ງເປັນໄລຍະຕໍ່ສູ້ກູ້ຊາດ, ພັກ ກໍຄືລັດຖະບານລາວອິດສະຫຼະ ໄດ້ວາງນະໂຍບາຍ 12 ຂໍ້ ເຊິ່ງໃນນັ້ນ ຂໍ້ທີ 10 ແມ່ນເວົ້າເຖິງວຽກງານການຕ່າງປະເທດ ຄື **"ຜູກມິດກັບທຸກປະເທດ ທີ່ເຄົາລົບເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງລາວ ບົນພື້ນຖານຫຼັກການສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ"**. ຈຸດປະສົງ ເພື່ອຍາດແຍ່ງການສະໜັບສະໜູນຊ່ວຍເຫຼືອທາງດ້ານວັດຖຸ ແລະ ຈິດໃຈ ຈາກບັນດາປະເທດສັງຄົມນິຍົມ ແລະ ຂະບວນການກ້າວໜ້າໃນໂລກ ເພື່ອສົ່ງເສີມຂະບວນການຕໍ່ສູ້ ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ.

2. ປີ 1975 - 1982: ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ, ພັກ - ລັດເຮົາ ໄດ້ວາງນະໂຍບາຍການຕ່າງປະເທດ **"ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ບໍ່ຮ່ວມກຸ່ມ"**, ເພື່ອສະແດງຈຸດຢືນເປັນກາງ ໃນໄລຍະສົງຄາມເຢັນ ເຊິ່ງມີການສູ້ຍັນກັນ ລະຫວ່າງ 2 ຂົ້ວອຳນາດ ຄື: ສັງຄົມນິຍົມ ແລະ ທຶນນິຍົມ. ການວາງ

ນະໂຍບາຍດັ່ງກ່າວ ຈຸດປະສົງ ເພື່ອສ້າງຄວາມເຊື່ອໝັ້ນ ແລະ ຍາດແຍ່ງເອົາຄວາມເຫັນອົກເຫັນໃຈ ຈາກປະຊາຄົມໂລກ, ສ້າງເງື່ອນໄຂອັນດີໃນການປົວແປງບາດແຜຈາກສົງຄາມ ແລະ ສ້າງເງື່ອນໄຂອັນສະເພາະ ໃນການສ້າງສາພັດທະນາປະເທດຊາດ ຕາມເສັ້ນທາງສັງຄົມນິຍົມ ແລະ ແນໃສ່ຮັກສາສາຍພົວພັນ ກັບຂະບວນການບໍ່ຮ່ວມກຸ່ມ, ເຊິ່ງເປັນກຸ່ມປະເທດທີ່ກ້າວໜ້າ ຢູ່ໃນໂລກ ມີເປົ້າໝາຍຕ້ານລັດທິຈັກກະພັດ ແລະ ລ່າເມືອງຂຶ້ນ ທັງນັບຖືບັນດາປະເທດສັງຄົມນິຍົມ ເປັນພັນທະມິດ ຂອງຕົນ.

3. ປີ 1982 - 1986: ກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກ ໄດ້ຫັນນະໂຍບາຍການຕ່າງປະເທດ ຈາກການບໍ່ຮ່ວມກຸ່ມ ມາສູ່ສັງຄົມນິຍົມ ຄື: **"ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ສັງຄົມນິຍົມ"**, ເນື່ອງຈາກຄວາມຈຳເປັນພາວະວິໄສ ທີ່ຕ້ອງຊອກຫາເພື່ອນມິດ ຜູ້ທີ່ໄວ້ເນື້ອເຊື່ອໃຈໄດ້ ມາສະໜັບສະໜູນໃນການປະຕິບັດ 2 ໜ້າທີ່ຍຸດທະສາດ ຂອງພັກເຮົາ ຄື: ປົກປັກຮັກສາ ແລະ ສ້າງສາປະເທດຊາດ.

4. ປີ 1986 - ປັດຈຸບັນ: ນັບແຕ່ກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກ ມາເຖິງປັດຈຸບັນ, ພັກ ໄດ້ວາງແນວທາງການຕ່າງປະເທດ: **"ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ກັບນາໆປະເທດ"**. ນະໂຍບາຍການຕ່າງປະເທດລາວ ຈຶ່ງຈຳເປັນຕ້ອງໄດ້ປັບປ່ຽນ ເພື່ອຈະສາມາດຮັບມືກັບການຜັນແປ ຂອງການເມືອງໂລກ ແລະ ຮູບແບບການຮ່ວມມື ຂອງບັນດາປະເທດໃນໂລກ. ໃນນັ້ນ, ການຮ່ວມມືແມ່ນຕ້ອງ ຢູ່ບົນພື້ນຖານ 05 ຫຼັກການ ຢູ່ຮ່ວມກັນໂດຍສັນຕິ: **ເຄົາລົບເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນເຊິ່ງກັນ ແລະ ກັນ; ບໍ່ຮຸກຮານກັນ ແລະ ກັນ; ບໍ່ແຊກແຊງເຂົ້າກິດຈະການພາຍໃນ; ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.**

ພາຍຫຼັງສະຫະພາບໂຊວຽດພັງທະລາຍ ໃນປີ 1991 ເສົາຄ້ຳ ແລະ ກະດູກສັນຫຼັງ ຂອງຄ້າຍສັງຄົມນິຍົມໄດ້ສິ້ນສຸດລົງ, ສະພາບການ ຂອງໂລກ ໄດ້ມີການຜັນແປໄປຢ່າງໄວວາ ແລະ ສະຫຼັບສັບຊ້ອນ, ການພົວພັນຮ່ວມມື ກັບບັນດາປະເທດໃນໂລກ ມີຄວາມຈຳເປັນທີ່ຕ້ອງເປີດກວ້າງ, ບໍ່ສາມາດຈຳກັດພຽງແຕ່ປະເທດທີ່ມີລະບອບການເມືອງແບບດຽວກັນ ຫຼື ສອງຝ່າຍ, ຕໍ່ໜ້າສະພາບການດັ່ງກ່າວ ພັກໄດ້ມີນະໂຍບາຍເພີ່ມທະວີການພົວພັນຮ່ວມມືແບບຫຼາຍຝ່າຍ, ຫຼາຍຮູບແບບ, ຫຼາຍລະດັບ ແລະ ບໍ່ຈຳແນກລະບອບການເມືອງ ພາຍໃຕ້ຄຳຂວັນ **"ການທູດປ້ອງກັນເຫດ ແລະ ບຸກທະລຸ, ຕາມທິດນຳ ເພີ່ມມິດ ຫຼຸດຜ່ອນສັດຕູ"** ໂດຍຜົນສຳເລັດພົ້ນເດັ່ນ ຂອງການປະຕິບັດນະໂຍບາຍການຕ່າງປະເທດ ແມ່ນການເຂົ້າເປັນສະມາຊິກອາຊຽນ ໃນປີ 1997 ແລະ ການພັດທະນາສາຍພົວພັນຮ່ວມມື ກັບທຸກປະເທດທີ່ກ້າວໜ້າໃນໂລກ.

ປັດຈຸບັນ, ການພົວພັນຕ່າງປະເທດ ບໍ່ພຽງແຕ່ຕິດພັນກັບບັນຫາດ້ານການເມືອງ ແລະ ຄວາມໝັ້ນຄົງເທົ່ານັ້ນ, ແຕ່ໄດ້ຕິດພັນກັບບັນຫາເສດຖະກິດ ຫຼື ເອີ້ນວ່າ ການທູດເສດຖະກິດ ແນໃສ່ເພື່ອຂົນຂວາຍການຊ່ວຍເຫຼືອສາກົນ, ການລົງທຶນຕ່າງປະເທດ ແລະ ການຄ້າໃນຕະຫຼາດສາກົນ ເພື່ອແນໃສ່ການສ້າງເສດຖະກິດຂອງປະເທດຊາດ ກໍຄື ການສ້າງສາ ແລະ ພັດທະນາປະເທດຊາດ ໃຫ້ຫຼຸດພົ້ນອອກ ຈາກສະຖານະປະເທດດ້ອຍພັດທະນາ ຕາມຄາດໝາຍທີ່ກຳນົດໄວ້.

**III. ຜົນສຳເລັດການເຄື່ອນໄຫວວຽກງານການທູດ ຂອງລາວ ໃນໄລຍະຜ່ານມາ.**

ຕະຫຼອດໄລຍະ 78 ປີທີ່ຜ່ານມາ, ວຽກງານການທູດ ໄດ້ປະກອບສ່ວນອັນສຳຄັນ ຕໍ່ຜົນສຳເລັດ ຂອງການປະຕິວັດຊາດ ປະຊາທິປະໄຕ ໂດຍການສົມທົບກັນ ລະຫວ່າງ ກຳລັງປະກອບອາວຸດ ແລະ ການຕໍ່ສູ້ການເມືອງ ທີ່ບໍ່ສາມາດແຍກອອກຈາກກັນໄດ້. ໝາກຜົນລວມຍອດ ຂອງການປະສານສົມທົບກັນ ລະຫວ່າງກ້ອນກຳລັງປະກອບອາວຸດ ແລະ ການທູດ ມີສ່ວນຕັດສິນຊີ້ຂາດ ຕໍ່ການຕໍ່ສູ້ກູ້ຊາດຍາດເອົາເອກະລາດຈົນສາມາດສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975. ຕົກມາໃນໄລຍະໃໝ່, ບົດບາດ ຂອງການເຄື່ອນໄຫວການທູດລາວ ຍິ່ງມີບົດບາດພົ້ນເດັ່ນຂຶ້ນກວ່າເກົ່າ ໂດຍສະເພາະ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ຮຽກຮ້ອງໃຫ້ມີການປັບຕົວໃຫ້ສາມາດເຊື່ອມສານໄປໃນຫຼາຍທິດ, ຫຼາຍຝ່າຍ ແລະ ຫຼາຍລະດັບ ເພື່ອການເຊື່ອມໂຍງພາກພື້ນ ແລະ ສາກົນ, ນຳເອົາຜົນປະໂຫຍດສູງສຸດມາສູ່ປະເທດຊາດ. ການເຄື່ອນໄຫວວຽກງານການທູດ ຂອງລາວ ສາມາດແບ່ງອອກເປັນ 02 ໄລຍະສຳຄັນ ດັ່ງນີ້:

1. ໄລຍະຕໍ່ສູ້ກູ້ຊາດ ແຕ່ປີ 1945 - 1975:

ໄຊຊະນະ ຂອງການລຸກຮື້ຂຶ້ນຍຶດອຳນາດເທື່ອທຳອິດ ໃນວັນທີ 12 ຕຸລາ 1945 ໄດ້ກາຍເປັນຈຸດເລີ່ມຕົ້ນໃນການເຄື່ອນໄຫວວຽກງານການທູດ ຂອງລາວ, 3 ຊາດອິນດູຈີນ ລາວ, ຫວຽດນາມ ແລະ ກຳປູເຈຍ ໄດ້ຮັດແໜ້ນຄວາມສາມັກຄີກັນ ຕໍ່ສູ້ຕ້ານຈັກກະພັດຜູ້ຮຸກຮານໂຕດຽວກັນ, ບວກກັບການຊ່ວຍເຫຼືອ ຂອງສະຫະພາບໂຊວຽດ, ສປ ຈີນ ແລະ ບັນດາປະເທດສັງຄົມນິຍົມ ກໍຄືຂະບວນການປະຕິວັດ ແລະ ກຳລັງທີ່ກ້າວໜ້າໃນໂລກ ຈຶ່ງສາມາດຍາດໄດ້ໄຊຊະນະອັນໃຫຍ່ຫຼວງ ໃນບັ້ນຣິບດຽນບຽນຟູ. ຈາກນັ້ນ, ກໍກ້າວໄປສູ່ການຮັບຮອງເອົາສັນຍາເຊີແນວ ກ່ຽວກັບອິນດູຈີນ ປີ 1954 ເພື່ອໃຫ້ຢຸດຕິສົງຄາມ ແລະ ມອບເອກະລາດໃຫ້ແກ່ 3 ປະເທດ ລາວ, ຫວຽດນາມ ແລະ ກຳປູເຈຍ, ບົນພື້ນຖານນັ້ນ, ແນວລາວຮັກຊາດ ຮ່ວມກັບ ຝ່າຍເປັນກາງ ໄດ້ໃຊ້ຊ່ອງທາງການທູດ ເພື່ອຂໍການສະໜັບສະໜູນ ຈາກບັນດາປະເທດສັງຄົມນິຍົມອ້າຍນ້ອງແລະ ປະເທດທີ່ຮັກຫອມສັນຕິພາບ ຈຶ່ງສາມາດຍາດໄດ້ສັນຍາເຊີແນວ ກ່ຽວກັບລາວ ປີ 1962. ພ້ອມດຽວກັນນີ້, ການລວມລາວທັງສາມຄັ້ງ ໃນປີ 1957, 1962 ແລະ 1973 ໄດ້ສະແດງໃຫ້ເຫັນເຖິງ **ລັກສະນະສະດຸ້ງໄວ, ຫັກຫຼົບທົບໄດ້, ຍືດຍຸ່ນ, ອ່ອນໂຍນ, ແຕ່ໜັກແໜ້ນ - ບໍ່ອ່ອນແອ ແລະ ເຄັ່ງຂຶມ ທັງເຈລະຈາ ແລະ ຕໍ່ສູ້** ໃນເວລາດຽວກັນ ບົນພື້ນຖານອຸດົມການທາງການເມືອງ ຂອງການເຄື່ອນໄຫວການທູດລາວ. ຍິ່ງໄປກວ່ານັ້ນ, ໄຊຊະນະອັນຍິ່ງໃຫຍ່ທີ່ສຸດ ຂອງປະຊາຊົນລາວບັນດາເຜົ່າທົ່ວປະເທດ ແມ່ນການເອົາຊະນະສົງຄາມ ແລະ ຂັບໄລ່ສັດຕູຜູ້ຮຸກຮານອອກຈາກປະເທດໄດ້ ໂດຍບໍ່ມີສຽງປືນແຕກ ແລະ ສາມາດສະຖາປະນາເປັນປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ດ້ວຍຄວາມພາກພູມໃຈທີ່ສຸດ ໃນວັນທີ 2 ທັນວາ 1975.

2. ໄລຍະປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແຕ່ປີ 1975 - ປັດຈຸບັນ

ໃນໄລຍະໃໝ່ ການປະຕິບັດນະໂຍບາຍການຕ່າງປະເທດ ແມ່ນພາຍໃຕ້ຄຳຂວັນ **"ການທູດປ້ອງກັນເຫດ ແລະ ບຸກທະລຸ ເພື່ອປົກປັກຮັກສາ ແລະ ພັດທະນາປະເທດຊາດ"** ແລະ ປະຕິບັດຕາມທິດນຳ **ເພີ່ມມິດຫຼຸດຜ່ອນສັດຕູ, ທັງຕໍ່ສູ້ ແລະ ຍາດແຍ່ງການຮ່ວມມື - ຊ່ວຍເຫຼືອ** ເຮັດໃຫ້ການພົວພັນຮ່ວມມືສາກົນ ສືບຕໍ່ໄດ້

ຮັບການເປີດກວ້າງ, ເພື່ອນມິດຂອງ ສປປ ລາວ ນັບມື້ນັບເພີ່ມຫຼາຍຂຶ້ນ. ປັດຈຸບັນ ສປປ ລາວ ໄດ້ມີສາຍພົວພັນທາງການທູດທັງໝົດ **148 ປະເທດ** ຈາກ 193 ປະເທດທົ່ວໂລກ, ມີສຳນັກງານຜູ້ຕາງໜ້າ ສປປ ລາວ ທີ່ຕ່າງປະເທດ ຈຳນວນ 41 ແຫ່ງ, ໃນນີ້ ມີສະຖານເອກອັກຄະລັດຖະທູດ 27 ແຫ່ງ, ສຳນັກງານຜູ້ຕາງໜ້າຖາວອນ 3 ແຫ່ງ, ສະຖານກົງສູນໃຫຍ່ 10 ແຫ່ງ ແລະ ຫ້ອງການກົງສູນ 1 ແຫ່ງ, ກົງສຸນກິດຕິມະສັກຂອງ ສປປ ລາວ ຢູ່ຕ່າງປະເທດ 12 ແຫ່ງ. ສະຖານທູດຕ່າງປະເທດທີ່ມີສຳນັກງານ ຢູ່ລາວ 28 ແຫ່ງ, ກົງສູນໃຫຍ່ 6 ແຫ່ງ, 18 ອົງການຈັດຕັ້ງ ທີ່ຂຶ້ນກັບລັດຖະບານ ແລະ ມີກົງສູນກິດຕິມະສັກ 18 ປະເທດປະຈຳ ຢູ່ລາວ.

ຜົນສຳເລັດການເຄື່ອນໄຫວໃນຂອບສອງຝ່າຍ ໄດ້ເພີ່ມທະວີການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ, ໂດຍສະເພາະ ກັບປະເທດສັງຄົມນິຍົມອ້າຍນ້ອງ ຄື: ສສ. ຫວຽດນາມ, ສປ. ຈີນ, ສ. ກູບາ ແລະ ສປປ. ເກົາຫຼີ ໄດ້ຮັບການເສີມຂະຫຍາຍຢ່າງໜັກແໜ້ນ ແລະ ກ້າວເຂົ້າສູ່ລວງເລິກຕາມລຳດັບ. ສືບຕໍ່ຮັກສາໄດ້ບັນຍາກາດການພົວພັນຮ່ວມມືທີ່ດີ, ໄວ້ເນື້ອເຊື່ອໃຈ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ, ກັບບັນດາປະເທດເພື່ອນບ້ານໃກ້ຄຽງ ຄື: ກຳປູເຈຍ, ໄທ, ມຽນມາ ກ້າວສູ່ການເປັນຄູ່ຮ່ວມມືຍຸດທະສາດ ເພື່ອການຈະເລີນເຕີບໂຕ ແລະ ການພັດທະນາແບບຍືນຍົງ. ນອກນີ້, ຍັງມີຄູ່ຮ່ວມຊະຕາກຳສັງຄົມນິຍົມ ລາວ - ຈີນ, ຈີນ - ລາວ, ຄູ່ຮ່ວມມືຍຸດທະສາດ ລາວ - ຣັດເຊຍ ທີ່ສືບຕໍ່ຂະຫຍາຍຕົວສູ່ຄຸນນະພາບໃໝ່; ຫັນການພົວພັນກັບບັນດາປະເທດໃຫຍ່ ກໍຄື ກຸ່ມປະເທດທີ່ຊຸກຍູ້ການຊ່ວຍເຫຼືອທາງການ ເພື່ອການພັດທະນາ ຫຼື ການຊ່ວຍເຫຼືອລ້າ ( ODA ) ໃຫ້ແກ່ ສປປ ລາວ ເປັນຕົ້ນແມ່ນ ຍີ່ປຸ່ນ, ສ. ເກົາຫຼີ, ອົດສະຕຣາລີ, ອີຢູ ແລະ ປະເທດຮ່ວມມືທີ່ສຳຄັນເຂົ້າສູ່ລວງເລິກມີຜົນປະໂຫຍດຕິດພັນກັນຫຼາຍຂຶ້ນ.

ຜົນສຳເລັດພົ້ນເດັ່ນ ຂອງການຮ່ວມມືໃນຂອບຫຼາຍຝ່າຍ ໄດ້ເຄື່ອນໄຫວຢ່າງຕັ້ງໜ້າ ແລະ ເປັນເຈົ້າການ ຢູ່ໃນເວທີພາກພື້ນ ແລະ ສາກົນ ເຊັ່ນ: ອາຊຽນ, ອົງການສະຫະປະຊາຊາດ ແລະ ອົງການເຄືອຂ່າຍຄັງປັນຍາ, ອົງການຟຣັ່ງໂກໂຟນີ, ຂະບວນການບໍ່ຮ່ວມກຸ່ມ, ກຸ່ມປະເທດດ້ອຍພັດທະນາ, ກຸ່ມປະເທດກຳລັງພັດທະນາ ທີ່ບໍ່ມີຊາຍແດນຕິດຈອດທະເລ ແລະ ຂອບການຮ່ວມມືອື່ນໆ. ມາຮອດປັດຈຸບັນ ສປປ ລາວ ໄດ້ເຂົ້າເປັນສະມາຊິກ ອົງການຈັດຕັ້ງສາກົນຫຼາຍກວ່າ 238 ອົງການ. ຜົນສຳເລັດອັນພົ້ນເດັ່ນ ແມ່ນ ສປປ ລາວ ເຄີຍໄດ້ຮັບກຽດເປັນປະທານກອງປະຊຸມລະດັບພາກພື້ນ ແລະ ສາກົນຫຼາຍໆຄັ້ງຜ່ານມາ ຄື: ເປັນປະທານອາຊຽນຄັ້ງທຳອິດ ໃນສົກປີ 2004 - 2005, ເປັນປະທານກອງປະຊຸມສຸດຍອດອາຊຽນ ຄັ້ງທີ 10 ໃນປີ 2004 ແລະ ຄັ້ງທີ 2 ໃນປີ 2016, ໄດ້ເປັນປະທານກອງປະຊຸມສຸດຍອດອາຊຽນ ຄັ້ງທີ 28 ແລະ 29 ແລະ ຈະໄດ້ເປັນປະທານອາຊຽນ ຄັ້ງທີ 3 ໃນປີ 2024. ນອກຈາກນີ້, ສປປ ລາວ ຍັງໄດ້ເປັນປະທານອາເຊັມ ຄັ້ງທີ 9 ໃນປີ 2012 ທີ່ມີບັນດາຜູ້ນຳຂັ້ນສູງ ແລະ ປະມຸກລັດເຂົ້າຮ່ວມ, ເຊິ່ງຖືເປັນຊຸມປີ ທີ່ການເຄື່ອນໄຫວວຽກງານການຕ່າງປະເທດ ໄດ້ພົ້ນເດັ່ນທີ່ສຸດໃນປະຫວັດສາດ, ພ້ອມດຽວກັນນີ້, ແມ່ນໄດ້ເປັນປະທານຮ່ວມກອງປະຊຸມສຸດຍອດກັບ ຄູ່ຮ່ວມເຈລະຈາ ຂອງອາຊຽນທີ່ຈັດ ຢູ່ນອກພາກພື້ນອາຊຽນ ເຊັ່ນ: ກອງປະຊຸມສຸດຍອດອາຊຽນ - ສ. ອາເມຣິກາ, ກອງປະຊຸມສຸດຍອດສະເຫຼີມສະຫຼອງການພົວພັນ ອາຊຽນ - ຣັດເຊຍ. ນອກຈາກນີ້, ສປປ ລາວ ຍັງໄດ້ຮັບຄວາມເຊື່ອໝັ້ນໃຫ້ເປັນເຈົ້າພາບຈັດກອງປະຊຸມລະດັບພາກພື້ນ ແລະ ສາກົນຕ່າງໆ

ທີ່ສຳຄັນຫຼາຍກວ່າ 50 ຄັ້ງ, ດ້ວຍຜົນສຳເລັດອັນຈົບງາມ ເປັນຕົ້ນແມ່ນ ກອງປະຊຸມລັດຖະມົນຕີຕ່າງປະເທດແມ່ນ້ຳຂອງ - ແມ່ນ້ຳລ້ານຊ້າງ, ກອງປະຊຸມສຸດຍອດ ແອັກແມັກ, CLV, CLMV, GMS ຂອບການຮ່ວມມືແມ່ນ້ຳຂອງ ແລະ ຄູ່ຮ່ວມພັດທະນາ. ພິເສດ, ໃນໄລຍະການແຜ່ລະບາດ ຂອງພະຍາດ ໂຄວິດ - 19, ສປປ ລາວ ໄດ້ເປັນເຈົ້າພາບຈັດກອງປະຊຸມສະພາປະສານງານອາຊຽນ ສະໄໝພິເສດ ແລະ ກອງປະຊຸມລັດຖະມົນຕີຕ່າງປະເທດ ອາຊຽນ - ຈີນ ເພື່ອປະກອບສ່ວນເຂົ້າໃນການຮັບມືກັບພະຍາດ ໂຄວິດ - 19 ແລະ ກອງປະຊຸມສາກົນປິ່ນອ້ອມຕ່າງໆ ໃນຮູບແບບກອງປະຊຸມທາງໄກ ແລະ ໃນປີ 2022 ສປປ ລາວ ກໍຖືກເລືອກຕັ້ງໃຫ້ເປັນສະມາຊິກອົງການ ECOSOC ຂອງສະຫະປະຊາຊາດ ປະຈຳສົກປີ 2023 - 2025. ນອກຈາກນັ້ນ, ສປ ລາວ ຍັງໄດ້ມີການເຄື່ອນໄຫວຢ່າງຕັ້ງໜ້າໃນຂອບການທູດຊ່ອງທາງທີສອງ ( Track II Diplomacy ) ເພື່ອຮັດແໜ້ນສາຍພົວພັນກັບບັນດາສະຖາບັນຄົ້ນຄວ້າຕ່າງໆ ໃນພາກພື້ນ ແລະ ສາກົນ ແນໃສ່ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ຜົນງານການຄົ້ນຄວ້າ ກ່ຽວກັບບັນຫາຕ່າງໆ ທີ່ພົ້ນເດັ່ນພາຍໃນພາກພື້ນ ແລະ ສາກົນ.

**IV. ບາງບົດຮຽນຈາກການເຄື່ອນໄຫວວຽກງານການຕ່າງປະເທດຂອງ ສປປ ລາວ.**

- ຜ່ານການເຄື່ອນໄຫວວຽກງານຕ່າງປະເທດ ຢ່າງຕັ້ງໜ້າ, ເປັນເຈົ້າການ ແລະ ມີຫຼັກການ ຂອງພັກໄດ້ເຮັດໃຫ້ຖານະບົດບາດ ຂອງປະເທດເຮົາພົ້ນເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

- ການພົວພັນ ກັບບັນດາປະເທດເພື່ອນມິດຍຸດທະສາດ ກ້າວເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳກວ່າເກົ່າ.

- ການພົວພັນ ກັບປະເທດມະຫາອຳນາດ ມີຄວາມໝັ້ນທ່ຽງ ແລະ ໄດ້ເປີດກວ້າງການພົວພັນປະເທດເພື່ອນມິດອື່ນໆຢ່າງມີຈຸດສຸມ.

- ພວກເຮົາມີຄວາມເປັນເຈົ້າການໃນການຕອບໂຕ້ຖ້ອຍທຳນອງໃສ່ຮ້າຍປ້າຍສີ ຂອງອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີ, ສາມາດຊີ້ແຈງອະທິບາຍ, ຍາດແຍ່ງຄວາມເປັນໃຈ ແລະ ການສະໜັບສະໜູນ ຂອງເພື່ອນມິດສາກົນນັບມື້ນັບຫຼາຍຂຶ້ນ, ສາມາດທັບມ້າງກົນອຸບາຍມ້າງເພທຳລາຍ ຂອງພວກບໍ່ຫວັງດີ ຕໍ່ລະບອບໃໝ່ ຂອງພວກເຮົາຢ່າງມີປະສິດທິຜົນ.

- ມີຄວາມໜັກແໜ້ນ ແລະ ຄ່ອງແຄ້ວ ໃນການປົກປັກຮັກສາອະທິປະໄຕ, ເຂດນ້ຳແດນດິນ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງຊາດ.

- ເປັນເຈົ້າການ ແລະ ຮັກສາບົດບາດອັນພົ້ນເດັ່ນຢ່າງຕັ້ງໜ້າຂອງ ສປປ ລາວ ຢູ່ເວທີອາຊຽນ, ອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນໆ, ສາມາດສ້າງໄດ້ສະພາບແວດລ້ອມ ທີ່ມີຄວາມໄວ້ວາງໃຈກັນ ແລະ ຮ່ວມມືກັນ ແບບຕ່າງຝ່າຍຕ່າງມີຜົນປະໂຫຍດ.

- ມີຜົນສຳເລັດໃນການຂົນຂວາຍຄົນເຊື້ອຊາດລາວ ຢູ່ຕ່າງປະເທດ ທັງຕິຖອຍການເຄື່ອນໄຫວ ປໍລະປັກຕໍ່ ສປປ ລາວ ຂອງກຸ່ມຄົນບໍ່ດີ.

- ການເຄື່ອນໄຫວຕ່າງປະເທດ ໄດ້ມີການຕິດແໜ້ນກັບການຍາດແຍ່ງການຊ່ວຍເຫຼືອ ເພື່ອການພັດທະນາ ແລະ ການຮ່ວມມືດ້ານເສດຖະກິດ, ການເຊື່ອມໂຍງເສດຖະກິດສາກົນ ແລະ ການຕິດຈອດພາກພື້ນ ສືບຕໍ່ມີບາດກ້າວທີ່ໜັກແໜ້ນ ແລະ ມີຜົນສຳເລັດທີ່ເປັນຮູບປະທຳຢ່າງຈະແຈ້ງ.

- ນັບແຕ່ມື້ສ້າງຕັ້ງ ວັນການທູດລາວ ມາເຖິງປະຈຸບັນ ໄດ້ມີບັນດາທ່ານທີ່ເປັນການນຳໃນຂະແໜງການຕ່າງປະເທດ ດັ່ງນີ້:

+ ທ່ານ ສຸພານຸວົງ ລັດຖະມົນຕີກະຊວງການຕ່າງປະເທດ ( 1945 - 1962 )

+ ທ່ານ ກີນີມ ພົນເສນາ ລັດຖະມົນຕີກະຊວງການຕ່າງປະເທດ ( 1962 - 1963 )

+ ທ່ານ ຄຳສຸກ ແກ້ວລາ ( 1963 ) ປ່ຽນແທນ ທ່ານ ກີນີມ ພົນເສນາ ທີ່ຖືກລອບຄາດຕະກຳ ວັນທີ 1 ເມສາ 1963.

+ ທ່ານ ສຸພານຸວົງ ຊີ້ນຳຫ້ອງການພົວພັນການຕ່າງປະເທດ ຢູ່ເຂດປົດປ່ອຍ ( 1963 - 1973 )

+ ທ່ານ ພູມີ ວົງວິຈິດ ລັດຖະມົນຕີກະຊວງການຕ່າງປະເທດ ( 1973 - 1975 )

+ ທ່ານ ພູນ ສີປະເສີດ ລັດຖະມົນຕີກະຊວງການຕ່າງປະເທດ ( 1975 - 1993 )

+ ທ່ານ ສົມສະຫວາດ ເລັ່ງສະຫວັດ ລັດຖະມົນຕີກະຊວງການຕ່າງປະເທດ (1993 - 2006)

+ ທ່ານ ທອງລຸນ ສີສຸລິດ ລັດຖະມົນຕີກະຊວງການຕ່າງປະເທດ ( 2006 - 2016 )

+ ທ່ານ ສະເຫຼີມໄຊ ກົມມະສິດ ລັດຖະມົນຕີກະຊວງການຕ່າງປະເທດ ( 2016 - ປັດຈຸບັນ ).

-----------------------------